ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປລາວ

**National Regulatory Authority for UXO/Mine Action in the Lao PDR**

# ສະຖິຕິຕົວເລກທາງການ ແລະ ວຽກງານຄວາມຄືບໜ້າ ຂອງ ການແກ້ໄຂ ບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ

- ສປປ ລາວ ເປັນປະເທດໜຶ່ງດຽວທີ່ໄດ້ຮັບຜົນກະທົບຈາກລະເບີດບົມບີ ຫຼາຍທີ່ສຸດ ໂດຍສະເລ່ຍ ໃສ່ຫົວຄົນໃນປະຫັວດສາດ.
- ປະມານ 25% ຂອງຈຳນນວນບ້ານ ຢູ່ໃນ ສປປ ລາວ ແມ່ນຍັງຖືກປົກຄຸມໂດຍ ລະເບີດບໍ່ທັນແຕກ
- ຫຼາຍກວ່າ 580.000 ຖ້ຽວບິນໄດ້ນຳເອົາລະເບີດມາຖິ້ມໃສ່ຜືນແຜ່ນດິນ ຂອງ ສປປ ລາວ.
- ລະຫ່ວາງປີ 1964 ຫາ 1973, ລະເບີດຫຼາຍກ່ວາ 2 ລ້ານກ່ວາໂຕນໄດ້ຖອກເທລົງໃສ່ດິນລາວ.
- ລະເບີດ ກະປາງ ຫຼື "ບົມບີ " (ດັ່ງທີ່ພວກເຮົາຮູ້ດີ ) ແມ່ນ ລະເບີດທີ່ບໍ່ທັນແຕກ ສ່ວນຫຼາຍ ທີ່ຍັງຄົງຄ້າງຢູ່.
- ລະເບີດ ບົມບີ ຫຼາຍກວ່າ 270 ລ້ານໜ່ວຍ ໄດ້ຖອກເທລົງໃສ່ ຜືນແຜ່ນດິນຂອງ ສປປ ລາວ
- ຄາດກະວ່າປະມານ 30% ຂອງລະເບີດປະເພດນີ້ ຍັງບໍ່ທັນແຕກ
- ຄາດວ່າມີຫຼາຍກ່ວາ 80 ລ້ານໜ່ວຍ ທີ່ບໍ່ທັນແຕກ ແລະ ຍັງຕົກຄ້າງຢູ່ ສປປ ລາວ ພາຍຫຼັງສົງຄາມສິ້ນສຸດລົງ.
- ທົ່ວປະເທດລາວ ທັງໝົດ 17 ແຂວງ ແມ່ນຖືກກະທົບ ຈາກລະເບີດບໍ່ທັນແຕກຕົກຄ້າງເຫຼົ່ານັ້ນ
- 41 ເມືອງຂອງ 46 ເມືອງທີ່ທຸກຍາກທີ່ສຸດ ຢູ່ ໃນ ສປປ ລາວ ແມ່ນໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກທີ່ຕົກຄ້າງ.
- ປະຊາຊົນ ຫຼາຍກວ່າ 50.000 ຄົນ ຖືກບາດເຈັບ ແລະ ລົ້ມຕາຍ ຈາກ ອຸປະຕິເຫດລະເບີດບໍ່ທັນແຕກ ທີ່ເກີດຂຶ້ນໃນລະຫ່າວງປີ 1964 ຫາ 2008.
- ໃນຈຳນວນທີ່ກ່າວມາຂ້າງເທິງນັ້ນ ມີ 20.000 ຄົນ ຖືກບາດເຈັບ ແລະ ລົ້ມຕາຍ ທີ່ເກີດຈາກອຸປະຕິເຫດລະເບີດບໍ່ທັນແຕກ ໃນຊ່ວງຫຼັງສົງຄາມ ລະຫວ່າງ ປີ 1974-2008.

ໃນຈຳນວນ 50,000 ຄົນ ແບ່ງສາເຫດອັດຕາບາດເຈັບລົ້ມຕາຍດັ່ງນີ້:

- 60% ແມ່ນຖືກລົ້ມຕາຍ
- 40% ແມ່ນຖືກບາດເຈັບ
- 23% ແມ່ນເດັກນ້ອຍ
- 13% ແມ່ນຜູ້ຍິງ
- 15% ສາຍເຫດຈາກ ບົມບີ
- 20.000 ກ່ວາຄົນ ແມ່ນລອດຊີວິດຈາກອຸປະຕິເຫດ

ໃນຈຳນວນ 20.000 ຄົນທີ່ລອດຊີວິດຈາກ ອຸປະຕິເຫດນັ້ນມີ:

- 13,500 ຄົນ ສູນເສຍແຂນຂາ

- 25% ຂອງຜູ້ທີ່ໄດ້ຮັບບາດເຈັບ ຫຼື ລົ້ມຕາຍ ແມ່ນຢູ່ແຂວງສະຫວັນນະເຂດ
- 12% ຂອງຜູ້ທີ່ໄດ້ຮັບບາດເຈັບ ຫຼື ລົ້ມຕາຍ ແມ່ນຢູ່ແຂວງຊຽງຂວາງ
- ຕາມການລາຍງານ ໃນຮອບ 10 ປີ ແມ່ນມີຜູ້ໄດ້ຮັບເຄາະຮ້າຍເພີ້ມຂື້ນປະມານ 300 ຄົນຕໍ່ປີ
- ໃນຫຼາຍທົດສະວັດທີ່ຜ່ານມາ, 30% ຂອງຈຳນວນຜູ້ຖືກບາດເຈັບ ຫຼື ລົ້ມຕາຍ ແມ່ນເກີດຈາກອຸປະຕິເຫດຈາກລະເບີດ ບົມບີ.
- ໃນທົດສະວັດທີ່ຜ່ານມາ, 40% ຂອງຈຳນວນຜູ້ຖືກບາດເຈັບ ຫຼື ລົ້ມຕາຍ ແມ່ນ ເດັກນ້ອຍ.

ການປະຕິບັດງານເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກ, ໃນຊ່ວງປີ 1996 ຫາ 2009 ຄື:

- ໄດ້ທຳລາຍລະເບີດບໍທັນແຕກຈຳນວນ 1,090,228 ໜ່ວຍ ເຊິ່ງປະກອບມີ :
  - ທຳລາຍ ບົມໃຫ່ຍຈຳນວນ 5,242 ໜ່ວຍ
  - ທຳລາຍ ບົມບີຈຳນວນ 480,297 ໜ່ວຍ
  - ທຳລາຍ ລະເບີດຝັງດິນ (ມີນ) ຈຳນວນ 6, 095 ໜ່ວຍ
  - ທຳລາຍສຳພາວຸດອື່ນໆຈຳນວນ 597,405 ໜ່ວຍ
- ໄດ້ກວດກູ້ເນື້ອທີ່ດິນທາງໝົດຈຳນວນ 23,070 ເຮັກຕາ, ເຊິ່ງປະກອບມີຄື:
  - ດິນກະສິກຳ ຈຳນວນ 15,931 ເຮັກຕາ
  - ດິນພັດທະນາ ຈຳນວນ 7,139 ເຮັກຕາ
- ໄດ້ມອບເນື້ອທີ່ດິນກວດກູ້ແລ້ວເພື່ອນຳໃຊ້ໃນຈຸດປະສົງຕ່າງໆ ຈຳນວນ 914 ເຮັກຕາ, ໂດຍຜ່ານການສຳຫຼວດທາງດ້ານວິຊາການ ມີ:
  - ດິນກະສິກຳ ຈຳນວນ 746 ເຮັກຕາ
  - ດິນພັດທະນາ ຈຳນວນ168 ເຮັກຕາ
- ໄດ້ປະຕິບັດ ການລົງຢັ້ງມຢາມ ໃຫ້ການສຶກສາ ຄວາມສ່ຽງໄພຕໍ່ ລະເບີດບໍ່ທັນແຕກ ຈຳນວນ 12,039 ບ້ານ. (ໃນນັ້ນປະກອບມີການລົງຢັ້ງມຢາມຄືນອີກ).

* ໃນເມື່ອກ່ອນຈຳນວນເມືອງທີ່ທຸກຍາກທີ່ສຸດ ທີ່ໄດ້ລະບຸ ຢູ່ໃນເອກະສານຕ່າງໆມີ 47 ເມືອງ. ແຕ່ໃນປີ 2009 ເມືອງ ບໍລິຄັນ, ແຂວງ ບໍລິຄຳໄຊ ທີ່ນອນຢູ່ໃນ 47 ເມືອງທຸກຍາກແຕ່ກ່ອນນັ້ນ, ແມ່ນໄດ້ຖືກປະກາດໃຫ້ເປັນເມືອງ ທີ່ພົ້ນຄວາມທຸກຍາກແລ້ວ.

** ເມືອງທີ່ທຸກຍາກທີ່ສຸດ ແມ່ນຖືກກຳນົດໃນ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຂອງ ລັດຖະບານ ສປປ ລາວ.

ຫົວໜ້າຫ້ອງການ ຄຄຊ

ຫ້ອງການ ຄ.ຄ.ຊ.

ເພັດສະຫວ່າງ ສຸນນະລາດ

ເອກະສານອ້າງອີງ:

- ກອງທັບອາກາດ ອາເມລິກາ, ກອງທັບເຮືອ ອາເມລິກາ, ຂໍ້ມູນຖິ້ມລະເບີດຂອງກອງທັບອາກາດ ຫວຽດນາມໃຕ້ ແລະ ກອງທັບອາກາດລາດຊະອານາຈັກ ລາວ - ຂໍ້ມູນລວບລວມມາຈາກ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກຢູ່ ສປປ ລາວ.

- ບົດລາຍງານຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກ - ຂໍ້ມູນລວບລວມມາຈາກ ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອການແກ້ໄຂບັນຫາລະເບີດບໍ່ ທັນແຕກຢູ່ ສປປ ລາວ.

- ບັນທຶກຂອງສະພາຕໍ່າ ອາເມລິກາ - ມີຢູ່ໃນ ຄະນະກຳມະການຄຸ້ມຄອງ ແຫ່ງຊາດເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກຢູ່ ສປປ ລາວ.

- ຂໍ້ມູນການສຳຫຼວດປະຊາກອນລາວ - ມີຢູ່ໃນ ຄະນະກຳມະການຄຸ້ມຄອງ ແຫ່ງຊາດເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກຢູ່ ສປປ ລາວ.

- ບົດຄົ້ນຄ້ວາແຫ່ງຊາດກ່ຽວກັບ ຜົນກະທົບຂອງລະເບີດບໍ່ທັນແຕກ ຕໍ່ ເສດຖະກິດ-ສັງຄົມ, ຂອງອົງການ ສາກົນ ເພື່ອຊ່ວຍເຫຼືອຄົນພິການ ແຫ່ງປະເທດ ເບັນຊິກ (HIB), ປີ 1997.

- ບົດລາຍງານການສຳຫຼວດແຫ່ງຊາດກ່ຽວກັບ ຜູ້ຖືກເຄາະຮ້າຍ ແລະ ບາດເຈັບຈາກ ລະເບີດບໍ່ທັນແຕກ ໃນທົ່ວປະເທດ ໄລຍະ 1, ໂດຍ ຄະນະກຳມະການຄຸ້ມຄອງ ແຫ່ງຊາດເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກຢູ່ ສປປ ລາວ, ວຽງຈັນ, ເດືອນທັນວາ 2009.

- "ກ້າວເດີນຢູ່ໂລກນີ້ຢ່າງປອດໄພ" ການເອົາໃຈໃສ່ ຂອງສະຫະລັດ ຕໍ່ການກວດກູ້ລະເບີດເພື່ອມະນຸດສະທຳ ໂດຍ ຫ້ອງການໂຄງການກວດກູ້ລະເບີດເພື່ອມະນຸດສະທຳ, ສຳນັກງານ ກິດຈະການ ການເມືອງ-ທະຫານ, ກະຊວງການຕ່າງປະເທດ ສະຫະລັດ, ວໍຊິງຕັນ ດີຊີ, ກໍລະກົດ 2009.

- ບົດລາຍງານການປະເມີນຜົນທົ່ວຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກຢູ່ ສປປ ລາວ, ໂດຍ ໂລເບີດ ກຼີບຟິນ, ໂລເບີດ ຄີເລ ແລະ ເພັດດາວັນ ໄຊຍະສຸກ, ວຽງຈັນ, ກໍລະກົດ 2008.

- ຕົ້ນສະບັບແຜນສຶກສາ: ເຊື່ອມສານການພັດທະນາໃນດ້ານກະສິກຳ ຢູ່ ສປປ ລາວ, ອົງການ ໄຈກາ, ວຽງຈັນ, ຕຸລາ 2001.

ປັບປຸງຫຼ້າສຸດ: 2 ມິຖຸນາ 2010